# ການປະມານການໂດຍສຸຈະລິດໃຈ

- ຄົນເຈັບມີສິດທີ່ຈະໄດ້ຮັບການປະມານການໂດຍສຸຈະລິດໃຈ ທີ່ອະທິບາຍວ່າຄ່າໃຊ້ຈ່າຍໃນການດູແລຮັກສາທາງການແພດຈະເປັນເທົ່າໃດ.

- ພາຍໃຕ້ກົດໝາຍ, ຜູ້ໃຫ້ບໍລິການທາງການແພດຕ້ອງສະໜອງການປະມານການໃບເກັບເງິນສໍາລັບເວດຊະພັນແລະບໍລິການທາງການແພດແກ່ຄົນເຈັບທີ່ບໍ່ມີປະກັນສຸຂະພາບ ຫຼື ແກ່ຜູ້ທີ່ບໍ່ໄດ້ໃຊ້ປະກັນສຸຂະພາບ.

- ຄົນເຈັບມີສິດທີ່ຈະໄດ້ຮັບການປະມານການໂດຍສຸຈະລິດໃຈສໍາລັບຄ່າໃຊ້ຈ່າຍທັງໝົດທີ່ຄາດວ່າຈະເກີດຂຶ້ນທີ່ເປັນເວດຊະພັນ ຫຼື ບໍລິການທາງການແພດທີ່ບໍ່ແມ່ນການປິ່ນປົວສຸກເສີນ. ການປະມານການເຫຼົ່ານີ້ລວມເຖິງຄ່າໃຊ້ຈ່າຍທີ່ກ່ຽວຂ້ອງ ເຊັ່ນ ການທົດສອບທາງການແພດ, ຢາທີ່ແພດສັ່ງ, ອຸປະກອນ ແລະຄ່າໂຮງໝໍ.

- ຄົນເຈັບຄວນຮ້ອງຂໍການປະມານການໂດຍສຸຈະລິດໃຈເປັນລາຍລັກອັກສອນຢ່າງໜ້ອຍໜຶ່ງວັນທໍາການຈາກຜູ້ໃຫ້ບໍລິການທາງການແພດກ່ອນທີ່ຈະໄດ້ຮັບເວດຊະພັນ ຫຼື ບໍລິການທາງການແພດ. ຄົນເຈັບອາດຈະສາມາດຮ້ອງຂໍການປະມານການໂດຍສຸຈະລິດໃຈກ່ອນທີ່ເຂົາເຈົ້າຈະນັດໝາຍເພື່ອຂໍຮັບເວດຊະພັນ ຫຼື ບໍລິການທາງການແພດ.

- ຄົນເຈັບທີ່ໄດ້ຮັບໃບເກັບເງິນທີ່ມີຈໍານວນສູງກວ່າການປະມານການໂດຍສຸຈະລິດໃຈຢ່າງໜ້ອຍ 400 ໂດລາຂຶ້ນໄປອາດຈະສາມາດໂຕ້ແຍ້ງໃບເກັບເງິນນັ້ນໄດ້.

- ຂໍແນະນໍາໃຫ້ຄົນເຈັບເກັບຮັກສາສໍາເນົາການປະມານການໂດຍສຸຈະລິດໃຈເອົາໄວ້.

**ສໍາລັບຄໍາຖາມ ຫຼື ຂໍ້ມູນເພີ່ມເຕີມກ່ຽວກັບການປະມານການໂດຍສຸຈະລິດໃຈ ກະລຸນາໄປທີ່ www.cms.gov/nosurprises ຫຼື ໂທໄປທີ່ 1-800-985-3059.**

Glencoe
REGIONAL HEALTH